ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ກົມເຕັກໂນໂລຊີຂໍ້ມູນຂ່າວສານ

ເລກທີ: 556 /ກຕຂ
ນະຄອນຫຼວງວຽງຈັນ, ວັນທີ: 26 ເມສາ 2017

# ຄຳແນະນຳ
# ວິທີການນຳໃຊ້ MT 202 ໂອນເງິນຜ່ານລະບົບ RTGS
# ເປັນສະກຸນເງິນກີບ, ໂດລາສະຫະລັດ ແລະ ບາດໄທ

## I. ຈຸດປະສົງ

ຄຳແນະນຳສະບັບນີ້ ແມ່ນ ຜັນຂະຫຍາຍ ແລະ ແນະນຳວິທີການນຳໃຊ້ປະເພດຂໍ້ຄວາມ 202 ( ຕໍ່ໄປເອີ້ນວ່າ MT 202 ) ເປັນສະກຸນເງິນກີບ, ໂດລາສະຫະລັດ ແລະ ບາດໄທ ໂອນເງິນຜ່ານລະບົບການໂອນເງິນແບບທັນທີ (RTGS) ເພື່ອໃຫ້ຜູ້ໃຊ້ບໍລິການ ເຂົ້າໃຈເຖິງວິທີການນຳໃຊ້ ແລະ ສ້າງທຸລະກິດໂອນເງິນ ຜ່ານລະບົບດັ່ງກ່າວໃຫ້ຖືກຕ້ອງຕາມຂັ້ນຕອນ ພ້ອມທັງຫຼີກເວັ້ນຂໍ້ຜິດພາດທີ່ອາດຈະເກີດຂຶ້ນ.

MT 202 ແມ່ນປະເພດຂໍ້ຄວາມໜຶ່ງໃນລະບົບ RTGS ທີ່ໃຊ້ອຳນວຍຄວາມສະດວກໃນການເຮັດທຸລະກຳໂອນເງິນລະຫວ່າງທະນາຄານທຸລະກິດດ້ວຍກັນ.

## II. ຂັ້ນຕອນແນະນຳວິທີການນຳໃຊ້

ແຜນວາດການເຮັດວຽກຂອງ MT202 ໃນລະບົບ RTGS




ໃນການສົ່ງ MT202 ຈະມີ 2 ພາກສ່ວນຄື: ຜູ້ລົງບັນຊີ (Operator) ແລະ ຜູ້ກວດກາ (Controller) ເຊິ່ງມີຂັ້ນຕອນການປະຕິບັດ ດັ່ງລາຍລະອຽດລຸ່ມນີ້:

ກ. ຜູ້ລົງບັນຊີ (Operator).

1. ເຂົ້າໄປທີ່ໂປຣແກຣມ RTGS ໃນ Icon "Operator" ຢູ່ໃນໜ້າຈໍ Desktop ຕາມຮູບທີ 1 ຫຼືເຂົ້າໄປທີ່ C:\RTSX\RTSXClients\ Operator ແລະ ເລືອກ OperatorWorkplaceORA.exe




ຮູບທີ 1

2. Log in ເຂົ້າສູ່ລະບົບ ໂດຍໃສ່ User ID ແລະ Password ຕາມຮູບທີ 2 ແລ້ວກົດປຸ່ມ OK.




ຮູບທີ 2

3. ຂັ້ນຕອນການເຂົ້າປ້ອນຂໍ້ມູນໃສ່ MT202 ແມ່ນເຂົ້າໄປທີ່ Document → New Document → MT202 ຕາມຮູບທີ 3




ຮູບທີ 3

4. ປ້ອນຂໍ້ມູນລາຍລະອຽດຕ່າງໆໃສ່ໃນແບບຟອມ MT 202




ຮູບທີ 4

(1) ຕື່ມໝາຍເລກອ້າງອີງ <u>**ຕົວຢ່າງ:**</u> APB0707201500001

(2) ເລືອກທະນາຄານປາຍທາງ <u>**ຕົວຢ່າງ:**</u> COEBLALA ເຊິ່ງເລກບັນຊີທະນາຄານປາຍທາງ ແມ່ນລະບົບຈະປ່ຽນໃຫ້ແບບອັດຕະໂນມັດຂອງແຕ່ລະສະກຸນເງິນ

(3) ເລືອກສະກຸນເງິນ

(4) ໃສ່ຈຳນວນເງິນທີ່ຕ້ອງການໂອນ

(5) ກໍລະນີທີ່ຕ້ອງການຕື່ມລາຍລະອຽດການໂອນແມ່ນໃຫ້ກົດປຸ່ມທີ່ມີເຄື່ອງໝາຍ "..." ຈະມີໜ້າຕ່າງເຕັ້ນຂຶ້ນມາດັ່ງຮູບທີ 5 ເພື່ອໃຫ້ຕື່ມຂໍ້ມູນ




ຮູບທີ 5:

5.1 ເລືອກ /BNF/

5.2 ຕື່ມເນື້ອໃນຈຸດປະສົງການໂອນ

5.3 ເລືອກລະຫັດຈຸດປະສົງການໂອນ

5.4 ຕື່ມເນື້ອໃນຈຸດປະສົງການໂອນເພີ່ມເຕີມ ເຊິ່ງໃນແຕ່ລະຫ້ອງຕ້ອງໄດ້ໃສ່ ເຄື່ອງໝາຍ " // " ໃສ່ດ້ານໜ້າທຸກຄັ້ງ.

5.5 ຢືນຢັນການຕື່ມລາຍລະອຽດການໂອນ

6 ສົ່ງໄປຫາຜູ້ອະນຸມັດ ກົດປຸ່ມ "OK".

ຕົວຢ່າງ: ຮູບແບບຂໍ້ຄວາມທີ່ສໍາເລັດແລ້ວ




ຮູບທີ 6

## ຂ. ຜູ້ກວດກາ Controller

1. ເຂົ້າໄປທີ່ໂປຣແກຣມ RTGS ໃນ icon Controller ຢູ່ໃນໜ້າຈໍ Desktop ດັ່ງ ຮູບທີ 7 ຫຼື ເຂົ້າໄປທີ່ C:\RTSX\RTSXClients\ Controller ແລະ ເລືອກ ControllerWorkplaceORA.exe




ຮູບທີ 7

2. Log in ເຂົ້າສູ່ລະບົບໂດຍໃສ່ User ID ແລະ Password ຕາມຮູບທີ 8, ແລ້ວກົດປຸ່ມ OK




ຮູບທີ 8

3. ຂັ້ນຕອນການເຂົ້າໄປອະນຸມັດທຸລະກຳ ແມ່ນ ເຂົ້າໄປທີ່ Document → Payments → Open ດັ່ງຮູບທີ 9




ຮູບທີ 9

4. ໃນໜ້າ Controller ໃຫ້ສັງເກດຖັນ Currency ເຊິ່ງຈະບອກໃຫ້ຮູ້ເຖິງລາຍລະອຽດຂອງສະກຸນເງິນ ທີ່ເຮັດທຸລະກຳຕາມຮູບທີ 10




ຮູບທີ 10

ບົດແນະນຳສະບັບນີ້ຈະຊ່ວຍໃຫ້ການປະຕິບັດວຽກງານການໂອນເງິນຜ່ານລະບົບ ລະຫວ່າງ ຜູ້ໃຊ້ບໍລິການ ໄດ້ສະດວກ, ວ່ອງໄວ, ຫຼຸດຜ່ອນຄວາມຜິດພາດ ແລະ ຂັ້ນຕອນທາງດ້ານເອກະສານ, ເຊິ່ງມີປະໂຫຍດຕໍ່ຜູ້ໃຊ້ບໍລິການ.

ດັ່ງນັ້ນ, ຈຶ່ງເຮັດບົດແນະນຳສະບັບນີ້ຂຶ້ນເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ປ່ຽນແທນບົດແນະນຳການນຳໃຊ້ ການໂອນເງິນຜ່ານລະບົບຊຳລະມູນຄ່າສູງ RTGS ເປັນສະກຸນເງິນຕາຕ່າງປະເທດ (ໂດລາສະຫະລັດ ແລະ ບາດໄທ), ສະບັບເລກທີ 865/ກຕຂ, ວັນທີ 24/7/2015.

ຮັກສາການຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ



ໄຊ່ແກ້ວ ພູວງສີວິໄລ